# ຈົດໝາຍຂ່າວ ລາວ-ອີຢູ FLEGT

ກະຊວງອຸດສາຫະກຳ ແລະ ການຄ້າ
Ministry of Industry and Commerce




ຄະນະເຈລະຈາຝ່າຍລາວ ແລະ ຄະນະກຳມະທິການສະຫະພາບເອີຣົບ ຢູ່ເມືອງ ບຣັດໂຊ ໄດ້ຈັດກອງປະຊຸມທາງໄກຜ່ານວີດີໂອຄັ້ງທີ 4 ໃນວັນທີ 30 ຕຸລາ 2017. ຜູ້ເຂົ້າຮ່ວມຈາກປະເທດລາວລວມມີ ທ່ານ ລີໂອ ຟາເບີ, ເອກອັກຄະລັດຖະທູດ ສະຫະພາບເອີຣົບ ປະຈຳ ສປປ ລາວ; ທ່ານ ຄຳພຸດ ພັນດານຸວົງ, ຫົວໜ້າກົມກວດກາປ່າໄມ້; ທ່ານ ຊູຊາດ ໄຊຍະກຸມມານ, ຫົວໜ້າກົມປ່າໄມ້; ທ່ານ ມະໂນຣັກ ຣາຊະຈັກ, ຫົວໜ້າກົມອຸດສາຫະກຳ ແລະ ຫັດຖະກຳ; ແລະ ທ່ານ ທອງສະຫວັນ ສຸລິຍະມາດ, ປະທານ ສະມາຄົມອຸດສາຫະກຳປຸງແຕ່ງໄມ້ລາວ

## ສະບັບທີ 5 / 2017

## ກອງປະຊຸມທາງໄກ ຄັ້ງທີ 4 ໃນແຜນງານ Lao-EU FLEGT

ໃນວັນທີ 30 ເດືອນ ຕຸລາທີ່ຜ່ານມາ, ຄະນະເຈລະຈາຝ່າຍລາວ ໃນແຜນງານ FLEGT ໄດ້ເຂົ້າຮ່ວມກອງປະຊຸມທາງໄກຜ່ານທາງວີດີໂອ ກັບ ຄະນະເຈລະຈາຝ່າຍສະຫະພາບເອີຣົບ ທີ່ ຫ້ອງການໃຫຍ່ ຂອງ ສະຫະພາບເອີຣົບ ປະຈຳ ສປປ ລາວ. ກອງປະຊຸມຄັ້ງນີ້ມີຈຸດປະສົງເພື່ອລາຍງານຄວາມຄືບໜ້າຂອງທັງສອງຝ່າຍໃນການກະກຽມການເຈລະຈາຊ່ອງໜ້າ ຄັ້ງທີ 2 ທີ່ຈະຈັດຂຶ້ນໃນຕົ້ນປີ 2018.

ພາຍຫຼັງການນຳສະເໜີພາບລວມຂອງການທົບທວນບັນດານະໂຍບາຍຕ່າງໆທີ່ກ່ຽວຂ້ອງກັບແຜນງານ FLEGT ຂອງ ສປປ ລາວ ແລະ ຄວາມຄືບໜ້າຂອງແຜນງານ FLEGT ໃນບັນດາປະເທດຕ່າງໆ, ຄະນະເຈລະຈາຝ່າຍລາວ ໄດ້ນຳສະເໜີຄວາມຄືບໜ້າຂອງມາດຖານນິຍາມໄມ້ທີ່ຖືກຕ້ອງຕາມກົດໝາຍ ທີ່ໄດ້ປັບປຸງ. ນອກຈາກນັ້ນ ຍັງມີມາດຖານນິຍາມໄມ້ ທີ່ຖືກຕ້ອງຕາມກົດໝາຍ ທີ່ຍັງບໍ່ທັນຮ່າງເຊັ່ນ ນິຍາມໄມ້ຍຶດ ແລະ ໄມ້ນຳເຂົ້າ ເຊິ່ງມີແຜນທີ່ຈະຮ່າງຂຶ້ນ ໂດຍກຸ່ມຊ່ຽວຊານສະເພາະດ້ານ ແລະ ຈະໄດ້ນຳໄປສະເໜີ ໃນກອງປະຊຸມວິຊາການ ໃນເດືອນ ມັງກອນ ປີ 2018. ຄະນະເຈລະຈາຝ່າຍລາວຍັງໄດ້ໃຫ້ເຫດຜົນກ່ຽວກັບມາດຖານສຳລັບ ໄມ້ຊົມໃຊ້ບ້ານ ວ່າອາດຈະຖືກລວມເຂົ້າໃນການຄຸ້ມຄອງຕ່ອງໂສ້ການສະໜອງໄມ້ ໃນຂໍ້ຕົກລົງການເຂົ້າເປັນຄູ່ຮ່ວມສັນຍາການຄ້າແບບສະໝັກໃຈ (VPA) ແລະ ການຢັ້ງຢືນໄມ້ທີ່ຖືກກົດໝາຍຫຼາຍກວ່າ ເປັນມາດຖານຂອງຄວາມຖືກຕ້ອງຕາມກົດໝາຍ, ເນື່ອງຈາກວ່າ ໄມ້ທີ່ມາຈາກປ່າຊົມໃຊ້ບ້ານແມ່ນບໍ່ສາມາດນຳເຂົ້າໃຊ້ໃນການຄ້າໄດ້.

ທັງສອງຝ່າຍຍັງໄດ້ຮັບຟັງຂໍ້ມູນການນຳສະເໜີກ່ຽວກັບການຂຶ້ນທະບຽນທີ່ດິນສຳປະທານ ໂດຍທ່ານ ປອ ພົມມິ ອິນທິຈັກ, ກະຊວງກະສິກຳ ແລະ ປ່າໄມ້. ທ່ານໄດ້ອະທິບາຍວ່າວຽກງານນີ້ໄດ້ຮັບການສະໜັບສະໜູນໂດຍ ສູນພັດທະນາ ແລະ ສິ່ງແວດລ້ອມ ໃນການເກັບກຳ ແລະ ປະເມີນຂໍ້ມູນກ່ຽວກັບທີ່ດິນສຳປະທານໃນທົ່ວປະເທດ ແລະ ຈະເປັນປະໂຫຍດຕໍ່ກັບ ແຜນງານ FLEGT ທາງດ້ານພາບລວມ ເຊັ່ນ ຮູ້ຂະໜາດຂອງການສຳປະທານທີ່ດິນປ່າໄມ້, ການມີສ່ວນຮ່ວມໃນການພັດທະນາກົນໄກໃນການຢັ້ງຢືນ ແລະ ການຕິດຕາມເນື້ອທີ່ສຳປະທານທີ່ດິນປ່າໄມ້.

ທັງສອງຝ່າຍຍັງໄດ້ຮັບຮູ້ວ່າ ທີມງານຝ່າຍລາວໄດ້ສຸມໃສ່ວຽກງານໃນການພັດທະນາ ຂໍ້ຕົກລົງ VPA ຢ່າງຫ້າວຫັນ ແລະ ຄາດວ່າຈະຈັດກອງປະຊຸມການເຈລະຈາຊ່ອງໜ້າ ຄັ້ງທີ 2 ໃນທ້າຍເດືອນ ກຸມພາ ຫຼື ຕົ້ນເດືອນ ມີນາ 2018 ຢູ່ປະເທດລາວ ເຊິ່ງຈະມີຕົວແທນຈາກຫຼາຍພາກສ່ວນເຂົ້າຮ່ວມ ລວມທັງ ພາກລັດ, ເອກະຊົນ ແລະ ອົງການຈັດຕັ້ງທາງສັງຄົມ.

### ເພີ່ມເຕີມໄດ້ທີ່ FLEGTlaos.com

ທ່ານສາມາດ ດາວໂຫຼດ:

·ບົດບັນທຶກກອງປະຊຸມ ວິຊາການຮ່ວມ ໃນການກະກຽມການເຈລະຈາ ຄັ້ງທີ I ຄັ້ງວັນທີ 24-25 ເມສາ 2017 (ພາສາອັງກິດ)

·ບົດບັດທຶກກອງປະຊຸມເຈລະຈາ ຄັ້ງທີ I ຂອງ ແຜນງານ FLEGT VPA ຄັ້ງວັນທີ 27-28 ເມສາ 2017 (ພາສາອັງກິດ)

·ບົດນຳສະເໜີ “Remote Sensing Tools for Monitoring of Conversion Areas in a future Timber Legality Assurance System for Lao PDR” (ພາສາອັງກິດ)

**ປະທານຮ່ວມໃນກອງປະຊຸມທາງໄກ:**

**ສະຫະພາບເອີຣົບ:** ທ່ານ Luca Perez, Policy Officer, Directorate-General for Environment, European Commission

**ລາວ:**

ທ່ານ ຊູຊາດ ໄຊຍະກຸມມານ, ຫົວໜ້າກົມປ່າໄມ້

ທ່ານ ຄຳພຸດ ພັນດານຸວົງ, ຫົວໜ້າກົມກວດກາປ່າໄມ້

ທ່ານ ມະໂນຣັກ ຣາຊະຈັກ, ຫົວໜ້າກົມອຸດສາຫະກຳ ແລະ ຫັດຖະກຳ

## ການຕັດໄມ້ທີ່ຜິດກົດໝາຍເພີ່ມຂຶ້ນ ໃນປະເທດກຳປູເຈຍ

ໃນເດືອນ ພຶດສະພາ 2017 ທີ່ຜ່ານມາ, ໄດ້ມີການເຜີຍແຜ່ການຕັດໄມ້ທີ່ຜິດກົດໝາຍຢ່າງກ້ວາງຂວາງ ໃນປ່າສະຫງວນແຫ່ງຊາດທາງພາກຕາເວັນອອກຂອງປະເທດກຳປູເຈຍ. ລາຍລະອຽດຂອງບົດລາຍງານດັ່ງກ່າວ ໄດ້ລະບຸຂໍ້ມູນກ່ຽວກັບການນຳເຂົ້າໄມ້ທີ່ບໍ່ມີໃບອະນຸຍາດ ເຂົ້າສູ່ພາກກາງຂອງປະເທດຫວຽດນາມ, ເຊິ່ງລະເມີດ ລະບຽບການຫ້າມສົ່ງອອກໄມ້ທ່ອນຂອງປະເທດກຳປູເຈຍ. ຕັ້ງແຕ່ປີ 2016 ເປັນຕົ້ນມາ ມີໄມ້ຫຼາຍກວ່າ 300.000 ແມັດກ້ອນ ໄດ້ຖືກລັກລອບສົ່ງອອກຈາກປະເທດກຳປູເຈຍ.

ເພື່ອໃຫ້ຄວາມກະຈ່າງແຈ້ງຕໍ່ກັບບົດລາຍງາຍດັ່ງກ່າວ ແລະ ຄວາມສົນໃຈຈາກສາກົນ, ລັດຖະບານຫວຽດນາມປະກາດຈະທົບທວນຄືນຕໍ່ກັບບັນຫາການຄ້າທີ່ຜິດກົດໝາຍ, ເຊິ່ງຍັງໄດ້ຍົກຂຶ້ນສົນທະນາກັບ ສະຫະພາບເອີຣົບ ໃນລະຫວ່າງການເຈລະຈາ ຂໍ້ຕົກລົງ VPA ຄັ້ງສຸດທ້າຍ ໃນວັນທີ 11 ເດືອນ ພຶດສະພາ ທີ່ຜ່ານມາ. ເຖິງແມ່ນວ່າຈະຍັງບໍ່ທັນມີ

## ການຕັດໄມ້ທີ່ຜິດກົດໝາຍເພີ່ມຂຶ້ນ ໃນປະເທດກຳປູເຈຍ (ຕໍ່)

ລາຍລະອຽດຕໍ່ກັບບັນຫາດັ່ງກ່າວອອກມາກໍຕາມ, ປະເທດຫວຽດນາມຍັງສືບຕໍ່ໃຫ້ມີການປົກປັກຮັກສາປ່າໄມ້ເພີ່ມຂຶ້ນ. ທ່ານ ຫງວຽນ ຊວນຟຸກ ນາຍົກລັດຖະມົນຕີ ປະເທດຫວຽດນາມ ເຊິ່ງເປັນປະທານກອງປະຊຸມລະດັບຊາດກ່ຽວກັບການຄຸ້ມຄອງປ່າໄມ້ ໃນວັນທີ 14 ເດືອນ ຕຸລາ ທີ່ຜ່ານມາ, ໄດ້ຮຽກຮ້ອງໃຫ້ ອຳນາດການປົກຄອງທີ່ກ່ຽວຂ້ອງທຸກພາກສ່ວນຕ້ອງຮ່ວມກັນປະຕິບັດຄຳສັ່ງຂອງລັດຖະບານ ແລະ ລົງໂທດບັນດາບຸກຄົນ ແລະ ບໍລິສັດ ທີ່ມີສ່ວນໃນການທຳລາຍປ່າໄມ້ຢ່າງເຂັ້ມງວດ. ໂດຍອີງຕາມ ຄະນະຜູ້ແທນສະຫະພາບເອີຣົບ ປະຈຳ ປະເທດຫວຽດນາມ ໄດ້ກ່າວວ່າ ລັດຖະບານປະເທດຫວຽດນາມຍັງໄດ້ໃຫ້ຄຳໝັ້ນສັນຍາໃນຂະບວນການພັດທະນາ ຂໍ້ຕົກລົງ VPA ວ່າຈະເພີ່ມກົດໝາຍທີ່ຈະຊ່ວຍເພີ່ມທະວີ ໃນການກວດສອບການນຳເຂົ້າໄມ້. ຄວາມສຳຄັນຂອງອຸດສາຫະກຳປຸງແຕ່ງໄມ້ຂອງປະເທດຕໍ່ກັບສາກົນ ແລະ ຄວາມຕ້ອງການທີ່ຈະຈັດຕັ້ງປະຕິບັດຂໍ້ຕົກລົງ VPA ຢ່າງມີປະສິດທິຜົນ ແມ່ນສະແດງໃຫ້ເຫັນໃນການສົ່ງອອກຜະລິດຕະພັນໄມ້ຂອງປະເທດຫວຽດນາມທີ່ມີມູນຄ່າປະມານ 8 ຕື້ ໂດລາສະຫະລັດ ໃນປີນີ້. ໃນຕໍ່ໜ້າ ລັດຖະບານຫວຽດນາມຕ້ອງໄດ້ຊອກຫາແນວທາງແກ້ໄຂ ແລະ ຍຸດທະສາດໄລຍະຍາວທີ່ຈະຊ່ວຍບັນລຸເປົ້າໝາຍໃນການສ້າງໃບຢັ້ງຢືນໄມ້ທີ່ຖືກຕ້ອງຕາມກົດໝາຍໃຫ້ແກ່ບັນດາໂຮງງານປຸງແຕ່ງໄມ້ ພາຍໃນປີ 2021.

ແຫຼ່ງຂໍ້ມູນ:

- Environmental Investigation Agency (2017). Repeat Offender: Vietnam's persistent trade in illegal timber. London: EIA. Retrieved from https://eia-international.org/wp-content/uploads/Repeat-Offender.pdf.
- Tatarski, M. (2017, May 31). Vietnam pledges to investigate massive illegal logging violations as international pressure grows. Mongabay. Retrieved from https://news.mongabay.com/2017/05/vietnam-pledges-to-investigate-massive-illegal-logging-violations-as-international-pressure-grows/.

## ອົງການຈັດຕັ້ງທາງສັງຄົມລາວ ແລກປ່ຽນບົດຮຽນກ່ຽວກັບ ແຜນງານ FLEGT VPA ຢູ່ປະເທດ ອິນໂດເນເຊຍ

ໃນເດືອນ ກັນຍາ 2017 ທີ່ຜ່ານມາ, ສະມາຊິກຂອງອົງການຈັດຕັ້ງທາງສັງຄົມ ໃນແຜນງານ FLEGT VPA ຈຳນວນ 5 ທ່ານ ໄດ້ເຂົ້າຮ່ວມການທັດສະນະສຶກສາໄລຍະສັ້ນ ຢູ່ປະເທດ ອິນໂດເນເຊຍ ເພື່ອສ້າງຄວາມເຂົ້າໃຈກ່ຽວກັບ ແຜນງານ FLEGT VPA ທີ່ປະເທດ ອິນໂດເນເຊຍ ເພື່ອນຳມາໃຊ້ໃຫ້ແທດເໝາະກັບປະເທດລາວ. ລະບົບຄໍ້າປະກັນໄມ້ທີ່ຖືກຕ້ອງຕາມກົດໝາຍຂອງປະເທດ ອິນໂດເນເຊຍ ເຊິ່ງເອີ້ນວ່າ SVLK (ຄຳວ່າ TLAS ໃນ ພາສາອິນໂດເນເຊຍ) ເປັນລະບົບ FLEGT ທຳອິດ ທີ່ສົ່ງໄມ້ທີ່ຖືກກົດໝາຍທີ່ມີໃບຢັ້ງຢືນ ອອກສູ່ຕະຫຼາດເອີຣົບ.




ຮູບພາບຕົວແທນຈາກ ຄະນະຂອງອົງການຈັດຕັ້ງທາງສັງຄົມຫຼັກໃນແຜນງານ FLEGT, ພະນັກງານ ອົງການ WWF ປະຈຳ ລາວ ແລະ WWF ປະຈຳ ອິນໂດເນເຊຍ ພ້ອມດ້ວຍ ອົງການຈັດຕັ້ງທາງສັງຄົມຂອງປະເທດ ອິນໂດເນເຊຍ

ຜູ້ເຂົ້າຮ່ວມການທັດສະນະສຶກສາຢູ່ປະເທດ ອິນໂດເນເຊຍ ລວມມີ 5 ທ່ານ ເຊິ່ງເປັນຕົວແທນຈາກຄະນະຂອງອົງການຈັດຕັ້ງທາງສັງຄົມຫຼັກໃນແຜນງານ FLEGT ເຊິ່ງໄດ້ຖືກຄັດເລືອກໂດຍເຄືອຂ່າຍອົງການຈັດຕັ້ງທາງສັງຄົມ ໃນແຜນງານ FLEGT. ການທັດສະນະສຶກສາໃນຄັ້ງນີ້ ແມ່ນໄດ້ຮັບການສະໜັບສະໜູນທາງດ້ານທຶນຮອນໂດຍ ອົງການ WWF ປະຈຳລາວ ແລະ ໂຄງການສະໜັບສະໜູນແຜນງານ FLEGT FAO ແລະ ໄດ້ຮັບການຕ້ອນຮັບໂດຍ ອົງການ WWF ປະຈຳປະເທດ ອິນໂດເນເຊຍ.

ສະມາຊິກ CSO ຂອງລາວ ໃຊ້ເວລາໃນການທັດສະນະສຶກສາເປັນເວລາ 1 ອາທິດ ຢູ່ Jakarta, Bogor, ແລະ Ponorogo ເພື່ອຮ່ວມປະຊຸມກັບລັດຖະບານ, ພາກເອກະຊົນ, ອົງການຈັດຕັ້ງທາງສັງຄົມ ແລະ ໜ່ວຍຄຸ້ມຄອງປ່າຂັ້ນບ້ານ (FMUs) ເຊິ່ງໄດ້ຮຽນຮູ້ວ່າ ອົງການຈັດຕັ້ງທາງສັງຄົມໃນປະເທດ ອິນໂດເນເຊຍ ມີບົດບາດອັນພົ້ນເດັ່ນໃນການພັດທະນາ ຂໍ້ຕົກລົງ VPA ແລະ SVLK ພ້ອມທັງຍັງສືບຕໍ່ເຂົ້າຮ່ວມໃນການຈັດຕັ້ງປະຕິບັດລະບົບ SVLK ໂດຍຜ່ານການສະໜັບສະໜູນໜ່ວຍ FMUs ໃນຂັ້ນຊຸມຊົນທ້ອງຖິ່ນ ແລະ ສວນປ່າປູກຂະໜາດນ້ອຍ; ໂດຍຜ່ານການຮັບປະກັນຄວາມຖືກຕ້ອງຕາມກົດໝາຍ SVLK ແລະ ຂໍ້ກຳນົດໃນການອອກໃບອະນຸຍາດ ໃນຖານະຜູ້ກວດສອບແບບອິດສະຫຼະ.

ສິ່ງທີ່ສະແດງໃຫ້ເຫັນໄດ້ຢ່າງພົ້ນເດັ່ນໃນລະຫວ່າງການທັດສະນະສຶກສາແມ່ນນໍ້າໃຈໃນການປະສານງານ ແລະ ຄວາມເປັນເຈົ້າການໃນການຄຸ້ມຄອງປ່າໄມ້ແບບຍືນຍົງ ແລະ ການຄ້າໄມ້ທີ່ຖືກຕ້ອງຕາມກົດໝາຍ ໂດຍລັດຖະບານ ອິນໂດເນເຊຍ, ພາກເອກະຊົນ ແລະ ອົງການຈັດຕັ້ງທາງສັງຄົມ. ບັນດາຜູ້ມີສ່ວນຮ່ວມທັງໝົດໄດ້ໃຫ້ເຫັນວ່າການມີສ່ວນຮ່ວມຢ່າງເອົາຈິງເອົາຈັງໂດຍຄູ່ຮ່ວມງານ FLEGT ໄດ້ສ້າງຄວາມສົມບູນແບບ ແລະ ຄວາມໄວ້ວາງໃຈ ໃນຂໍ້ຕົກລົງ VPA ແລະ SVLK.

ການທັດສະນະສຶກສາໃນມື້ສຸດທ້າຍແມ່ນການຢ້ຽມຢາມໜ່ວຍຄຸ້ມຄອງປ່າຂັ້ນບ້ານ, Enga Mulyo, ແລະ ອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານ ໃນຂັ້ນທ້ອງຖິ່ນ, PERSEPSI, ທີ່ສະໜັບສະໜູນພວກເຂົາ. Enga Mulyo ແມ່ນໄດ້ຮັບໃບອະນຸຍາດ SVLK ແລະ ໃບຢັ້ງຢືນ FSC ເພື່ອສະໜອງໄມ້ທີ່ຖືກຕ້ອງຕາມກົດໝາຍ ທີ່ປູກຢູ່ໃນສວນປູກຂະໜາດນ້ອຍ ໂດຍປະຊາຊົນ. ສະມາຊິກ CSO ຂອງລາວໄດ້ໃຫ້ຮູ້ວ່າ ແບບທີ່ຄ້າຍຄືກັນນີ້ຈະສາມາດນຳໄປໃຊ້ໄດ້ໃນປະເທດລາວ ແລະ ຍັງສົນທະນາເພື່ອສະເໜີແນວທາງອອກດັ່ງກ່າວໃຫ້ແກ່ ບັນດາຜູ້ມີສ່ວນຮ່ວມໃນແຜນງານ Lao FLEGT ແລະ ອົງການຈັດຕັ້ງຕ່າງໆ ທີ່ໃຫ້ການສະໜັບສະໜູນ.

## ການເຈລະຈາ ຄັ້ງທຳອິດ ລະຫວ່າງ ປະເທດ ໄທ ແລະ ສະຫະພາບເອີຣົບ ໃນແຜນງານ FLEGT VPA

ປະເທດໄທ ແລະ ສະຫະພາບເອີຣົບ ໄດ້ຈັດການເຈລະຈາຄັ້ງທຳອິດຂຶ້ນ ເພື່ອບັນລຸ ຂໍ້ຕົກລົງການເຂົ້າເປັນຄູ່ຮ່ວມສັນຍາການຄ້າແບບສະໝັກໃຈ (VPA) ເພື່ອປັບປຸງການຄຸ້ມຄອງປ່າໄມ້ ແລະ ສົ່ງເສີມການຄ້າໄມ້ທີ່ຖືກກົດໝາຍ. ການເຈລະຈາດັ່ງກ່າວໄດ້ຈັດຂຶ້ນໃນລະຫວ່າງວັນທີ 29 ຫາ 30 ມິຖຸນາ 2017, ເຊິ່ງໄດ້ສຸມໃສ່ການພັດທະນາຮ່າງ ນິຍາມໄມ້ທີ່ຖືກກົດໝາຍ (TLD) ແລະ ເປົ້າໝາຍຕ່າງໆ ຈົນເຖິງ ເດືອນ ມີນາ 2018. ວຽກງານທາງດ້ານວິຊາການ ເຊັ່ນ ການທົດສອບ TLD ພາກສະໜາມ ແລະ ການຄຸ້ມຄອງຕ່ອງໂສ້ການສະໜອງໄມ້ ໄດ້ຮັບການປັບປຸງເພີ່ມເຕີມໃນກອງປະຊຸມຄະນະສະເພາະກິດ ທີ່ມີຂຶ້ນ 3 ຄັ້ງ ເຊິ່ງຈັດຂຶ້ນໂດຍ ສຳນັກງານເລຂາທິການແຜນງານ FLEGT ລະຫວ່າງ ປະເທດໄທ ແລະ ສະຫະພາບເອີຣົບ (TEFSO) ໃນເດືອນ ກໍລະກົດ, ສິງຫາ ແລະ ກັນຍາ 2017 ທີ່ຜ່ານມາ

ຖ້າທ່ານຕ້ອງການຮັບຂໍ້ມູນກ່ຽວກັບແຜນງານ FLEGT ລະຫວ່າງ ປະເທດໄທ ແລະ ສະຫະພາບເອີຣົບ, ທ່ານສາມາດລົງທະບຽນຮັບຈົດໝາຍຂ່າວ ຈາກ TEFSO ໄດ້ທີ່: http://tefso.org/en/category/newsletter-en/.

ຕິດຕໍ່ສອບຖາມ ແລະ ສົ່ງຂ່າວໄດ້ທີ່:

ພະແນກນິຕິກຳ ແລະ ນະໂຍບາຍກວດກາປ່າໄມ້

(ຫ້ອງການປະສານງານ FLEGT)

ກົມກວດກາປ່າໄມ້

ທາດດຳ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ

ໂທລະສັບ: +856-21-255 264

ໂທລະສານ: +856-21-255 263

ອີເມລ໌: info@flegtlaos.com

www.FLEGTlaos.com